## ສານຂອງພະນະທ່ານ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ
## ເນື່ອງໃນໂອກາດ ວັນເດັກສາກົນ 1 ມິຖຸນາ 2024

**- ບັນດາທ່ານ ທີ່ນັບຖື,**

**- ຫລານນ້ອຍເຍົາວະຊົນ ແລະ ອະນຸຊົນລາວບັນດາເຜົ່າ ທີ່ຮັກແພງທັງຫລາຍ,**

ເນື່ອງໃນໂອກາດວັນເດັກສາກົນ ວັນທີ 1 ມິຖຸນາ 2024 ໄດ້ໝູນວຽນມາບັນຈົບຄົບຮອບອີກວາລະໜຶ່ງ ຊຶ່ງກົງກັບ ວັນປູກຕົ້ນໄມ້ແຫ່ງຊາດ, ຂ້າພະເຈົ້າໃນນາມຕາງໜ້າໃຫ້ການນຳພັກ-ລັດ ແລະ ໃນນາມສ່ວນຕົວ, ມີຄວາມຮູ້ສຶກດີໃຈ ແລະ ພູມໃຈເປັນຢ່າງຍິ່ງ ທີ່ໄດ້ເຫັນລູກຫລານ ເຍົາວະຊົນ, ອະນຸຊົນ ແລະ ເດັກລາວບັນດາເຜົ່າໃນຂອບເຂດທົ່ວປະເທດ ທີ່ເປັນເມັດພືດ ໜໍ່ແໜງທຶນຮອນສຳຄັນ ແລະ ປະເສີດຂອງປະເທດຊາດ ໄດ້ຮັບການເບິ່ງແຍງລ້ຽງດູ, ປົກປ້ອງ, ພັດທະນາ ແລະ ການມີສ່ວນຮ່ວມຮອບດ້ານ ເຮັດໃຫ້ມີໄວເດັກທີ່ສົດໃສ ກ້າວເປັນຜູ້ໃຫຍ່ທີ່ມີຄຸນນະພາບໃນອະນາຄົດ, ເປັນກຳລັງຕົ້ນຕໍ ແລະ ຕົ້ນທຶນສາຄັນຂອງຊາດ. ໃນໂອກາດວັນ ທີ 01 ມິຖຸນາ ຊຶ່ງເປັນວັນສຳຄັນສຳລັບເດັກນ້ອຍທຸກຄົນ, ຂ້າພະເຈົ້າຂໍຝາກຄວາມຮັກແພງ, ຄວາມຢ້ຽມຢາມຖາມຂ່າວອັນອົບອຸ່ນ ແລະ ຄຳອວຍພອນມາຍັງລູກຫຼານ, ເຍົາວະຊົນ ແລະ ອະນຸຊົນລາວບັນດາເຜົ່າທຸກຖ້ວນໜ້າ ທີ່ຢູ່ພາຍໃນ ແລະ ຕ່າງປະເທດ ຈົ່ງມີພະລານາໄມສົມບູນ, ມີສຸຂະພາບແຂງແຮງ, ມີຄວາມສີວິໄລທາງດ້ານຈິດໃຈ, ພ້ອມກັນສະຫລອງວັນເດັກສາກົນວັນທີ 1 ມິຖຸນາ 2024 ຢ່າງຟົດຟື້ນເບີກບານມ່ວນຊື່ນ ພາຍໃຕ້ຄຳຂວັນທີ່ວ່າ **"ສ້າງອະນາຄົດທີ່ຍືນຍົງ ຄືການສ້າງຄວາມເຂັ້ມແຂງໃຫ້ແກ່ເດັກ"**

ການສະເຫລີມສະຫລອງວັນເດັກສາກົນ 01 ມິຖຸນາ ທຸກໆປີ ຕິດພັນກັບຂະບວນການວັນປູກຕົ້ນໄມ້ແຫ່ງຊາດ ປຽບເໝືອນດັ່ງບຸນໃຫຍ່ຂອງເດັກທົ່ວໂລກ ທີ່ພ້ອມກັນສະເຫລີມສະຫລອງໄປກັບປະຊາຊາດໃນທົ່ວໂລກ ແລະ ທົ່ວທຸກຫົນທຸກແຫ່ງ ກໍຄືເດັກລາວບັນດາເຜົ່າ  ເພື່ອສົ່ງເສີມສິດ, ສ້າງຄວາມເຂັ້ມແຂງ, ຄວາມຜາສຸກ ແລະ ຄວາມເປັນຢູ່ທີ່ດີສຳລັບເດັກ, ເປັນວັນໂຄສະນາປູກຈິດສຳນຶກໃຫ້ຄອບຄົວ, ສັງຄົມ ໄດ້ຮັບຮູ້ເຂົ້າໃຈຕໍ່ບັນຫາ ແລະ ຜົນກະທົບທີ່ເກີດຂຶ້ນກັບເດັກ, ສະໜັບສະໜູນສິດທິຂອງເຂົາເຈົ້າ ແລະ ທ່າແຮງຂີດຄວາມສາມາດ ທີ່ບົ່ມຊ້ອນຂອງເດັກ. ອີກທັງເປັນການຢ້ຳເຕືອນເຖິງຄວາມສຳຄັນຂອງການລົງທຶນ ແລະ ການສ້າງຄວາມເຂັ້ມແຂງໃຫ້ເດັກ ທາງດ້ານການສຶກສາ, ສຸຂະພາບ ແລະ ການປົກປ້ອງເດັກໃຫ້ມີຄວາມປອດໄພຈາກ ຄວາມຮຸນແຮງ, ການກະທຳສິ່ງລາມົກອະນາຈານຕໍ່ເດັກທາງ (ຜ່ານ) ສື່ອອນລາຍ ແລະ ການກະທຳອື່ນໆ ທີ່ສົ່ງຜົນກະທົບຕໍ່ເດັກໃນທາງກົງ ແລະ ທາງອ້ອມ ເພື່ອຮັບປະກັນໃຫ້ເດັກທຸກຄົນມີອະນາຄົດທີ່ສົດໃສ ແລະ ຊີວິດທີ່ມີຄຸນນະພາບ.

ບົນພື້ນຖານໝາກຜົນຄວາມສໍາເລັດ ພາຍໃຕ້ການຊີ້ນໍາ-ນໍາພາຂອງພັກ-ລັດ, ຄວາມຮັບຜິດຊອບຈັດຕັ້ງປະຕິບັດຂອງ ຄະນະກໍາມາທິການ ເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ (ຄກມດ) ທຸກຂັ້ນ, ສົມທົບກັບການຮ່ວມມື ແລະ ສະໜັບສະໜູນຂອງອົງການຈັດຕັ້ງຂັ້ນສູນກາງ, ຂັ້ນທ້ອງຖິ່ນ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາ ຊົນ, ອົງການຈັດຕັ້ງສາກົນພາກທຸລະກິດທັງພາກລັດ ແລະ ເອກະຊົນ, ບັນດາຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນ ໃນຂອບວຽກການສົ່ງເສີມ, ປົກປ້ອງ ແລະ ພັດທະນາ ສິດທິເດັກ ລວມທັງຂອບວຽກພາຍໃຕ້ພັນທະນາຕໍ່ອາຊຽນ, ພາກພື້ນ ແລະ ສາກົນ, ໃນຊຸມປີທີ່ຜ່ານມາ ພວກເຮົາ ຍາດມາໄດ້ຜົນສໍາເລັດສໍາຄັນຫຼາຍດ້ານ ເປັນຕົ້ນ ສໍາເລັດການປັບປຸງກົດໝາຍ ວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຊຶ່ງໃນມາດຕາຂອງກົດໝາຍ ໄດ້ກໍານົດກ່ຽວກັບ ຫ້າມການລົງໂທດທາງດ້ານຮ່າງກາຍດ້ວຍການຂ້ຽນຕີ ແລະ ກາຍເປັນປະເທດທີ 66 ຂອງໂລ, ເປັນປະເທດທໍາອິດໃນອາຊຽນທີ່ໄດ້ມີການຮັບຮອງ ແລະ ປະກາດໃຊ້ກົດໝາຍທີ່ກ່ຽວຂ້ອງກັບການສົ່ງເສີມ ແລະ ປົກປ້ອງເດັກ; ສໍາເລັດ ບົດລາຍງານແຫ່ງຊາດ ປະຈໍາໄລຍະ 7 ໃນການຈັດຕັ້ງປະຕິບັດສົນທິສັນຍາ ວ່າດ້ວຍສິດທິເດັກໃນ ສປປ ລາວ ແລະ ສອງອະນຸສັນຍາເພີ່ມເຕີມກ່ຽວກັບ ການຄ້າຂາຍເດັກ, ການຄ້າປະເວນີເດັກ ແລະ ສິ່ງລາມົກອານາຈານກ່ຽວກັບເດັກ ແລະ ການເຂົ້າຮ່ວມຂອງເດັກ ໃນການປະທະກັນດ້ວຍກໍາລັງປະກອບອາວຸດ ແລະ ສົ່ງໃຫ້ອົງການ ສປຊ ຕາມລະບຽບການ; ຈັດເວທີເດັກລາວ ຄັ້ງທີ V ໃນຫົວຂໍ້ **"ພັດທະນາທັກສະຊີວິດ ແລະ ສ້າງຄວາມເຂັ້ມແຂງທາງດ້ານດິຈິຕອນ ເພື່ອເດັກລາວ"** ຊຶ່ງເປັນເວທີສໍາຄັນລະດັບຊາດ ສໍາລັບເດັກ ເພື່ອເປີດໂອກາດໃຫ້ຕົວແທນເດັກລາວໃນຂອບເຂດທົ່ວປະເທດໄດ້ມາເຕົ້າໂຮມ ແລະ ແລກປ່ຽນວັດທະນະທໍາ, ວິຖີດໍາລົງຊີວິດທ້ອງຖິ່ນເດັກ ທັງເປັນເວທີຄວາມສາມັກຄີ-ຮັກແພງ ລະຫວ່າງເດັກດ້ວຍກັນ. ສ້າງໂອກາດໃຫ້ເດັກ ໄດ້ສະແດງອອກພອນສະຫວັນ, ທັກສະ-ຄວາມອາດສາມາດ ແລະ ສ້າງຄວາມກຽມພ້ອມດ້ານຕ່າງໆ ສໍາລັບເດັກ ເພື່ອເປັນຕົວແທນຕາງໜ້າເດັກລາວ, ຕາງໜ້າຂອງປະເທດ ເຂົ້າຮ່ວມເວທີສໍາຄັນຕ່າງໆ ສໍາລັບເດັກໃນອາຊຽນ, ໃນພາກພື້ນ ແລະ ສາກົນ ຊຶ່ງການຈັດເວທີເດັກລາວຄັ້ງທີ V ຜ່ານມານັ້ນ ໄດ້ມີເດັກຮ່ວມຫຼາຍກວ່າ 350 ຄົນ ແລະ ມີຕົວແທນເດັກຈາກ 18 ແຂວງ; ນອກຈາກນັ້ນ, ໃນປີຜ່ານມາ ພັກ ແລະ ລັດຖະບານລາວ ເວົ້າສະເພາະ ຄະນະກໍາມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າແມ່ຍິງ, ແມ່ ແລະ ເດັກ ໄດ້ຈັດສະເຫຼີມສະຫຼອງວັນຄົບຮອບສົນທິສັນຍາ ວ່າດ້ວຍສິດທິເດັກ ຫຼື ວັນເດັກໂລກ (20 ພະຈິກ 2023) ດ້ວຍການຈັດປະຊຸມຮ່ວມກັບເດັກ ເພື່ອຮັບຟັງຄວາມຄິດເຫັນ ແລະ ທັດສະນະຂອງເດັກຕໍ່ບັນຫາທີ່ພວມຜະເຊີນໜ້າຢູ່ໃນປະຈຸບັນ, ຈັດກອງປະຊຸມລະດັບສູງ ເພື່ອທົບທວນການຈັດຕັ້ງປະຕິບັດວຽກສິດທິເດັກ ຢູ່ ສປປ ລາວ ເປັນການທົບທວນຄວາມຄືບໜ້າການຈັດຕັ້ງປະຕິບັດຄວາມໝາຍໝັ້ນຂອງລັດຖະບານ ກ່ຽວກັບການຕັ້ງປະຕິດບັດສິດທິເດັກ ໂດຍສະເພາະ ຄວາມໝາຍໝັ້ນຂອງບັນດາຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ, ອົງການຈັດຕັ້ງສາກົນ, ພາກທຸລະກິດເອກະຊົນ, ອົງການຈັດ ຕັ້ງທາງສັງຄົມ/ອົງການຈັດຕັ້ງສາກົນບໍ່ສັງກັດລັດຖະບານ, ເປີດໄຟສີຟ້າ ທີ່ເປັນສັນຍາລັກໃນການຊຸກຍູ້

ສົ່ງເສີມ ແລະ ປົກປ້ອງສິດທິເດັກ ໃສ່ປະຕູໄຊ ໄປພ້ອມໆ ກັນກັບບັນດາປະເທດຕ່າງໆ ໃນທົ່ວໂລກ; ດໍາເນີນການສຶກສາວິໄຈ ເພື່ອປະເມີນສະພາບຄວາມທຸກຍາກຂອງເດັກ ທີ່ໄດ້ຮັບຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທາງທໍາມະຊາດ ແລະ ພະຍາດລະບາດຕ່າງໆ. ການສຶກສາສະພາບການແຕ່ງດອງກ່ອນໄວ ແລະ ການຖືພາຂອງໄວໜຸ່ມ ຢູ່ ສປປ ລາວ; ປັບປຸງຖານຂໍ້ມູນທີ່ກ່ຽວຂ້ອງກັບເດັກ ໂດຍເຊື່ອມສານກັບການກະກຽມສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສໃນທົ່ວປະເທດ ຄັ້ງທີ V ໃນປີ 2025, ສໍາເລັດການສຶກສາການສໍາຫຼວດແຮງງານເດັກ ຄັ້ງທີ II ແລະ ແຜນງານແຫ່ງຊາດ ເພື່ອປ້ອງກັນ ແລະ ລຶບລ້າງການນໍາໃຊ້ແຮງງານເດັກ ແລະ ສົ່ງເສີມວຽກທີ່ມີຄຸນຄ່າສໍາລັບໄວໜຸ່ມຂອງ ສປປ ລາວ; ສໍາເລັດການອອກນິຕິກໍາປັບປຸງລະບົບ ແລະ ກົນໄກການປົກປ້ອງເດັກ, ລະບົບຍຸຕິທໍາສໍາລັບເດັກ ໂດຍໃຫ້ມີການປະສານງານ ແລະ ເຊື່ອມຈອດກັນຢ່າງກົມກຽວ ລະຫວ່າງກົນໄກ ແລະ ກິດຈະກໍາຕ່າງໆ ຂອງພາກສ່ວນຕ່າງໆ ທີ່ເຮັດວຽກກ່ຽວຂ້ອງກັບເດັກ. ນອກຈາກນັ້ນ, ຍັງໄດ້ສົມທົບກັບບັນດາກະຊວງ ແລະ ຂະແໜງການກ່ຽວຂ້ອງ ດໍາເນີນການຝຶກອົບຮົມ ແລະ ສ້າງຂີດຄວາມສາມາດ ທີ່ກ່ຽວຂ້ອງກັບສິດທິເດັກ ເປັນຕົ້ນ ຄູ່ມືແຫ່ງຊາດການມີສ່ວນຮ່ວມຂອງເດັກ ແລະ ໄວໜຸ່ມຂອງ ສປປ ລາວ, ຄູ່ມືພັດທະນາທັກສະຊີວິດ ສໍາລັບເດັກ ແລະ ໄວໜຸ່ມໃນ ສປປ ລາວ, ຄູ່ມືຝຶກອົບຮົມການປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ເດັກ, ຄູ່ມືແຫ່ງຊາດເພື່ອປ້ອງກັນ ແລະ ແກ້ໄຂຄວາມຮຸນແຮງຕໍ່ເດັກໃນໂຮງຮຽນຊັ້ນມັດທະຍົມສຶກສາ; ຄູ່ມືແຫ່ງຊາດສໍາລັບຄູຝຶກ; ການກະກຽມຄວາມພ້ອມທາງດ້ານອາຊີບໃຫ້ເດັກ ແລະ ໄວໜຸ່ມໃນ ສປປ ລາວ, ຄູ່ມືການລາຍງານ/ອອກຂ່າວທີ່ກ່ຽວກັບເດັກ; ຄູ່ມືສຸຂະພາບຈິດ ແລະ ຈິດຕະສັງຄົມສໍາລັບເດັກ ແລະ ໄວໜຸ່ມ ແລະ ສໍາລັບພໍ່ແມ່ຜູ້ປົກຄອງ; ຄູ່ມືສ້າງຄວາມເຂັ້ມແຂງລະບົບປົກປ້ອງເດັກ; ຄູ່ມືແນະນໍາທາງເລືອກໃນການເບິ່ງແຍງລ້ຽງດູເດັກທີ່ຂາດການເບິ່ງແຍງລ້ຽງດູທີ່ເໝາະສົມໃນ ສປປ ລາວ ແລະ ອື່ນໆ.

ສິ່ງສໍາຄັນສຸດໃນປີນີ້, ສປປ ລາວ ຈະໄດ້ເປັນເຈົ້າພາບຈັດກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44 ແລະ ກອງປະຊຸມອາຊຽນສໍາຄັນປິ່ນອ້ອມຂອງຂະແໜງການ; ພິເສດ ສໍາລັບວຽກເດັກ, ພວກເຮົາຈະເປັນເຈົ້າພາບຈັດເວທີເດັກອາຊຽນ ຄັ້ງທີ 8 ໂດຍຈະມີຕົວແທນເດັກໃນ 10 ປະເທດ ສະມາຊິກອາຊຽນ ແລະ ບັນດາຕົວແທນເດັກລາວ 18 ແຂວງ, ນະຄອນຫຼວງ ທົ່ວປະເທດເຂົ້າຮ່ວມ. ໂດຍຕົວແທນເດັກທັງ 10 ປະເທດອາຊຽນ ຈະໄດ້ມາຄົ້ນຄວ້າ, ປຶກສາຫາລື, ເອກະພາບ ຮ່ວມກັນສ້າງຂໍ້ສະເໜີແນະ/ຄໍາແນະນໍາ ໃນຫົວຂໍ້ **"ປະຕິບັດແຜນງານປ່ຽນແປງດິນຟ້າອາກາດ ທີ່ນໍາພາ ໂດຍເດັກ ເພື່ອສ້າງຄວາມເຂັ້ມແຂງໃນປະຊາຄົມ"** ເພື່ອສະເໜີຕໍ່ກອງປະຊຸມເຈົ້າໜ້າທີ່ດ້ານສະຫວັດດີການສັງຄົມ ແລະ ການພັດທະນາອາຊຽນ (SOMSWD) ກອງປະຊຸມລັດຖະມົນຕີອາຊຽນດ້ານສະຫວັດດີການສັງຄົມ ແລະ ການພັດທະນາ (AMMSWD); ແລະ ກອງປະຊຸມຄະນະກໍາມາທິການອາຊຽນ ເພື່ອປົກປ້ອງ ແລະ ສົ່ງເສີມສິດທິຂອງແມ່ຍິງ ແລະ ສິດທິເດັກ (ACWC) ຕາມລະບຽບການ. ນອກຈາກນັ້ນ, ໃນທ້າຍປີນີ້ ພວກເຮົາຈະໄດ້ສະເຫຼີມສະຫຼອງວັນສົນທິສັນຍາ ວ່າດ້ວຍ ສິດທິເດັກ ຫຼື ວັນເດັກໂລກ 20

ພະຈິກ (ປີ 2024 ແມ່ນ ຄົບຮອບ 35 ປີ) ແລະ ກອງປະຊຸມລະດັບສູງທົບທວນການຈັດຕັ້ງປະຕິບັດວຽກສິດທິເດັກ ຢູ່ ສປປ ລາວ ລວມທັງການຕິດຕາມຄວາມຄືບໜ້າຄວາມໝາຍໝັ້ນຂອງພາກສ່ວນຕ່າງໆ ແລະ ແຜນງານພັດທະນາເດັກລາວ ລຸ້ນປີ 2030. ຍ້ອນເຫັນໄດ້ຄວາມສຳຄັນດັ່ງກ່າວ, ການນຳພັກ-ລັດ ແລະ ປະຊາຊົນລາວບັນດາເຜົ່າທົ່ວປະເທດ ຈຶ່ງໄດ້ດຳເນີນການສະເຫລີມສະຫລອງວັນເດັກສາກົນ ວັນທີ 01 ມິຖຸນາ ໃນທຸກໆປີ ເພື່ອໂຄສະນາປູກຈິດສຳນຶກໃຫ້ທົ່ວປວງຊົນລາວບັນດາເຜົ່າ ໃຫ້ລະນຶກເຖິງຄວາມສຳຄັນຂອງເດັກ ແລະ ເຫັນໄດ້ສະພາບຂອງເດັກລາວບັນດາເຜົ່າ ຮ່ວມກັບເດັກຊາດອື່ນໆ ໃນພາກພື້ນ ແລະ ໃນໂລກ.

ຕໍ່ຜົນສຳເລັດດັ່ງກ່າວຂ້າງເທິງນັ້ນ, ຕາງໜ້າການນຳພັກ ແລະ ລັດຖະບານ, ຂ້າພະເຈົ້າ ຂໍສະແດງຄວາມຮູ້ບຸນຄຸນ ແລະ ຄວາມຂອບອົກຂອບໃຈ ມາຍັງການນຳພັກ-ລັດ ທີ່ເອົາໃຈໃສ່ ແລະ ໃຫ້ຄວາມສຳຄັນຕໍ່ວຽກງານສົ່ງເສີມສິດທິເດັກ ຕະຫຼອດມາ. ຂ້າພະເຈົ້າຂໍຍ້ອງຍໍຊົມເຊີຍພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ກໍຄືຄະນະກຳມາທິການ ເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ (ຄກມດ) ທຸກຂັ້ນ, ອົງການຈັດຕັ້ງຂັ້ນສູນກາງ, ຂັ້ນທ້ອງຖິ່ນ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສາກົນພາກທຸລະກິດເອກະຊົນ ຕະຫລອດຮອດພໍ່ແມ່ປະຊາຊົນລາວທຸກຖ້ວນໜ້າໃນທົ່ວປະເທດ ທີ່ໃຫ້ການຮ່ວມມື, ສະໜັບສະໜູນ ແລະ ປະກອບສ່ວນໃນວຽກງານສົ່ງເສີມ, ປົກປ້ອງ ແລະ ພັດທະນາ ສິດທິເດັກ ຈົນມີຜົນສຳເລັດເປັນກ້າວໆມາ.

**- ບັນດາທ່ານທີ່ນັບຖື,**

**- ຫລານອະນຸຊົນ, ເຍົາວະຊົນ ແລະ ເດັກລາວບັນດາເຜົ່າ ທີ່ຮັກແພງທັງຫລາຍ,**

ຄຽງຄູ່ກັບຜົນງານ ແລະ ຜົນສຳເລັດທີ່ກ່າວມາຂ້າງເທິງນັ້ນ ໃນຊຸມປີຜ່ານມາ, ຫຼາຍຂົງເຂດວຽກງານ ກໍຄືວຽກງານສົ່ງເສີມປົກປ້ອງ ແລະ ພັດທະນາ ສິດທິເດັກ ໃນປະເທດຂອງພວກເຮົາ ຍັງປະເຊີນໜ້າກັບສິ່ງທ້າທາຍ ແລະ ຜົນກະທົບຫລາຍໆດ້ານຈາກປັດໃຈພາຍໃນ ແລະ ພາຍນອກ ເປັນຕົ້ນສະພາບເສດຖະກິດ, ບັນຫາຊີວິດການເປັນຢູ່-ຄ່າຄອງຊີບ, ຄວາມທຸກຍາກຂາດເຂີນຂອງເດັກ, ຄວາມຮຸນແຮງຕໍ່ເດັກ, ການສະແຫວງຫາຜົນປະໂຫຍດ, ການຂູດຮີດໃຊ້ແຮງງານເດັກ, ການເຄື່ອນຍ້າຍແຮງງານເດັກ, ການຄ້າປະເວນີເດັກ, ການນຳໃຊ້ສື່ສັງຄົມອອນລາຍຂອງເດັກ, ອັດຕາການເຂົ້າຮຽນ-ການອອກໂຮງຮຽນຂອງເດັກ, ການແຕ່ງດອງກ່ອນໄວອັນຄວນ, ການແຕ່ງດອງແອບແຝງ, ການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ, ການເກັບກຳ-ສ້າງຖານຂໍ້ມູນສະຖິຕິກ່ຽວກັບເດັກ, ບັນຫາໄພສັງຄົມ, ປະກົດການຫຍໍ້ທໍ້ ແລະ ບັນຫາຢາເສບຕິດ ຍັງເປັນໄພຄຸກຄາມ ແລະ ຂໍ້ຈຳກັດການເຂົ້າເຖິງ ການພັດທະນາຂອງເດັກ. ນອກຈາກນີ້, ຄວາມເຂັ້ມແຂງຂອງກົງຈັກເສນາທິການຊ່ວຍວຽກຂອງຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ແຕ່ລະຂັ້ນ ຍັງເປັນຂໍ້ຈຳກັດ ແລະ ເຮັດໃຫ້ວຽກງານຈຳນວນໜຶ່ງຊັກຊ້າ ແລະ ບໍ່ສຳເລັດຜົນຕາມແຜນການ ເປັນຕົ້ນ ການປະຕິບັດພັນທະສາກົນ, ພາກພື້ນ ແລະ

ອາຊຽນ ໂດຍສະເພາະ ການສັງລວມຂໍ້ມູນ, ສະຫຼຸບລາຍງານຂໍ້ມູນສະຖິຕິ, ຄວາມຕໍ່ເນື່ອງໃນການຈັດຕັ້ງປະຕິບັດວຽກງານ, ຄວາມຈຳກັດທາງບຸກຄະລາກອນ ແລະ ງົບປະມານ ຍັງເປັນສິ່ງທ້າທາຍ ສ່ວນຫລາຍຍັງເອື່ອຍອີງໃສ່ການສະໜັບສະໜູນ ແລະ ຊ່ວຍເຫລືອຈາກຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນ.

ຕໍ່ສະພາບການດັ່ງກ່າວ, ຂ້າພະເຈົ້າ ຂໍຮຽກຮ້ອງມາຍັງ ອົງການຈັດຕັ້ງພັກ-ລັດ, ຄະນະກຳມາທິການ ເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ (ຄກມດ) ທຸກຂັ້ນ, ອົງການຈັດຕັ້ງຂັ້ນສູນກາງ, ຂັ້ນທ້ອງຖິ່ນ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສາກົນພາກທຸລະກິດ ທັງພາກລັດ ແລະ ເອກະຊົນ, ບັນດາຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນ ຕະຫລອດຮອດພໍ່ແມ່ປະຊາຊົນໃນທົ່ວປະເທດ ຈົ່ງຍົກສູງຄວາມຮັບຜິດຊອບ, ປະສານກົມກຽວ ແລະ ຮ່ວມມືກັນ ແກ້ໄຂປະກົດການຫຍໍ້ທໍ້, ຂໍ້ຄົງຄ້າງ ແລະ ສິ່ງທ້າທາຍຕ່າງໆທີ່ກ່າວມາຂ້າງເທິງນັ້ນ ດ້ວຍການຊຸກຍູ້ສົ່ງເສີມ, ສ້າງເງື່ອນໄຂ ແລະ ຕອບສະໜອງໂອກາດໃຫ້ເດັກລາວບັນດາເຜົ່າ ໄດ້ຮັບສິດ, ໄດ້ຮັບການປົກປ້ອງ, ການພັດທະນາ ແລະ ມີສ່ວນຮ່ວມ ເພື່ອໃຫ້ເດັກມີອະນາຄົດທີ່ສົດໃສ ກາຍເປັນຜູ້ໃຫຍ່ທີ່ມີຄຸນນະພາບ ແລະ ເປັນກຳລັງຊັບພະຍາກອນມະນຸດທີ່ສຳຄັນ, ເຂັ້ມແຂງຂອງປະເທດຊາດ ເພື່ອສືບຕໍ່ພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃຫ້ມີຄວາມຈະເລີນສີວິໄລ.

ທ້າຍສຸດນີ້, ໃນໂອກາດວັນເດັກສາກົນ ວັນທີ 1 ມິຖຸນາ 2024 ທີ່ໝູນວຽນມາຄົບຮອບ 99 ປີນີ້, ຂ້າພະເຈົ້າ ຂໍອວຍພອນມາຍັງ ລູກຫລານອະນຸຊົນລາວ, ເຍົາວະຊົນ ແລະ ເດັກລາວບັນດາເຜົ່າທຸກຖ້ວນໜ້າ ຈົ່ງມີຄວາມສຸກ, ມີພາລະໄມສົມບູນ, ປາສະຈາກໂລກໄພໄຂ້ເຈັບ, ໃຫ້ເປັນເດັກຄຳຮູ້ ເຊື່ອຟັງຄຳສອນຂອງພໍ່ແມ່, ຄູອາຈານ, ເປັນເດັກຮຽນດີ ຮຽນເກັ່ງ ມີຄຸນສົມບັດດີ ແລະ ມີຄວາມເຄົາລົບຕໍ່ຄູ-ອາຈານ, ເປັນລູກຫລານທີ່ດີຂອງຊາດ, ໝັ່ນສຶກສາຫາຄວາມຮູ້ເອົາໃຈໃສ່ພັດທະນາຕົນເອງຮອບດ້ານ ເພື່ອສ້າງອະນາຄົດທີ່ສົດໃສ ແລະ ຍືນຍົງ. ວັນເດັກປີນີ້ ຂໍໃຫ້ລູກຫລານອະນຸຊົນລາວ, ເຍົາວະຊົນ ແລະ ເດັກລາວບັນດາເຜົ່າທຸກຖ້ວນໜ້າ ຈົ່ງມີແຕ່ຄວາມເບີກບານມ່ວນຊື່ນ ແລະ ຂໍອວຍພອນໄຊໃຫ້ການສະເຫລີມສະຫລອງວັນເດັກສາກົນປີນີ້ ປະສົບຜົນສຳເລັດຢ່າງຈົບງາມ.

**ຂໍຂອບໃຈ**